# ຂໍ້ແນະນຳສຳລັບຄະນະກຳມະການປະສານງານກອງທຶນໂລກ: ກ່ຽວກັບການດຳເນີນງານຂອງຄະນະກຳມະການ

ປັບປຸງ: ຕຸລາ 2020

## ຈຸດປະສົງ ແລະ ຜູ້ຊົມໃຊ້ຂໍ້ແນະນຳສະບັບນີ້

- ຂໍ້ແນະນຳສະບັບນີ້ໄດ້ຍົກໃຫ້ເຫັນເຖິງບົດບາດຂອງກອງເລຂາ CCM ແລະ ປະທານ CCM ທີ່ມີຄວາມສາມາດໃນການນຳພາຄວາມຮັບຜິດຊອບດ້ານການບໍລິຫານຄຸ້ມຄອງທີ່ສຳຄັນຕາມລຳດັບ. ໃນຂະນະທີ່ສະມາຊິກທຸກຄົນມີຄວາມຮັບຜິດຊອບຮ່ວມກັນໃນການຈັດຕັ້ງປະຕິບັດການຄຸ້ມຄອງ, ກອງເລຂາ CCM ມີໜ້າທີ່ສະເພາະເພື່ອຂັບເຄື່ອນບັນດາຂັ້ນຕອນວຽກງານຕ່າງໆທີ່ສຳຄັນພາຍໃຕ້ການບໍລິຫານຄຸ້ມຄອງ ແລະ ນຳພາໂດຍປະທານ CCM.

## ນິຍາມກ່ຽວກັບການດຳເນີນງານຂອງCCM

- ການດຳເນີນງານຂອງ CCM ທີ່ດີເປັນພື້ນຖານໃຫ້ແກ່ CCM ສາມາດປະຕິບັດບັນດາໜ້າທີ່ຮັບຜິດຊອບຫຼັກຂອງຕົນໄດ້[1]. ສິ່ງເຫຼົ່ານີ້ລວມມີການພັດທະນາ ແລະ ການຕິດຕາມກວດກາແບບເປີດກ້ວາງກ່ຽວກັບການລົງທຶນຂອງກອງທຶນໂລກ; ການມີສ່ວນຮ່ວມຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງ, ລວມທັງການຈັດຕັ້ງທາງສັງຄົມ, ຊຸມຊົນແລະ ປະຊາກອນທີ່ໄດ້ຮັບຜົນກະທົບຫຼັກ, ການຈັດວາງຕຳແໜ່ງໂຄງສ້າງດ້ານການບໍລິຫານຄຸ້ມຄອງວຽກງານສະທາລະນະສຸກພາຍໃນໂຄງສ້າງແຫ່ງຊາດ. ເບິ່ງເອກະສານຄັດຕິດທີ 3 ສຳລັບຕົວຊີ້ບອກຂອງການດຳເນີນງານໃນແຕ່ລະຂົງເຂດຫຼັກ.
- ນອກຈາກຂໍ້ກຳນົດທີ່ສະທ້ອນໃຫ້ເຫັນໃນນະໂຍບາຍCCM, ຈຸດສຳຄັນສຳລັບການດຳເນີນງານປະກອບມີ:

1 **ການບໍລິຫານຄຸ້ມຄອງແຫຼ່ງທຶນເພື່ອໃຫ້ໄດ້ຮັບຜົນ**
ຂໍ້ຕົກລົງການຂົນຂວາຍແຫຼ່ງທຶນຂອງCCM ເພື່ອຮັບປະກັນການມີສ່ວນຮ່ວມໃນການປັບປຸງບົດສະເໜີຂໍທຶນ ແລະ ການຕິດຕາມກວດກາ

2 **ການຮັກສາບົດບາດໃນການຄຸ້ມຄອງ**
ໃຫ້ຮັບປະກັນວ່າຕົວແທນແມ່ນໄດ້ຮັບການຄັດເລືອກ, ແຕ່ງຕັ້ງ,ແລະ ມີຄວາມເຂົ້າໃຈຄວາມມຸ້ງຫ້ວງໃນການເປັນສະມາຊິກ

3 **ຮັບປະກັນການຊີ້ນຳ ແລະ ຂໍ້ກຳນົດດ້ານຈັນຍາບັນ**
ຄຸ້ມຄອງຂໍ້ຂັດແຍ່ງດ້ານຜົນປະໂຫຍດ ແລະ ປະຕິບັດຂໍ້ກຳນົດດ້ານຈັນຍາບັນ

## ການຈັດຕັ້ງປະຕິບັດການດຳເນີນງານຂອງ CCM

1. **ການບໍລິຫານຄຸ້ມຄອງແຫຼ່ງທຶນເພື່ອໃຫ້ໄດ້ຮັບຜົນ.** ທຸກໆສາມປີ, ກອງເລຂາ CCM ໄດ້ປະສານງານກັບກອງເລຂາກອງທຶນໂລກໂດຍກົງເພື່ອກຳນົດກິດຈະກຳຫຼັກແລະການລົງທຶນທີ່ກ່ຽວຂ້ອງເພື່ອຮັກສາການດຳເນີນງານດ້ານການຄຸ້ມຄອງ. ຜົນໄດ້ຮັບແມ່ນແຜນວຽກປະຈຳປີສຳລັບປີທີ່ໜຶ່ງ (ທົບທວນແລະປັບປຸງໃນປີທີ່ ສອງແລະສາມ) ພ້ອມຜົນງານທີ່ສຳຄັນເຊິ່ງ CCM ຈະໄດ້ຮັບການປະເມີນເພື່ອກຳນົດການສະໜອງທຶນຕໍ່ໄປ. ຂັ້ນຕອນ

[1]ໜ້າທີ່ຮັບຜິດຊອບຫຼັກໆໄດ້ກຳນົດ ແລະ ທົດສອບໃນລະຫວ່າງການເຮັດທົດລອງການປະຕິບັດ CCM Evolution (2018-2019) ລວມມີ: ການມີສ່ວນຮ່ວມ, ການດຳເນີນງານ,ການຕິດຕາມກວດກາ ແລະ ການຈັດວາງຕຳແໜ່ງ/ໂຄງສ້າງ

ໃນການສະໜອງທຶນຊ່ວຍເຫຼືອແຕ່ລະປີປະກອບມີ CCM, ທີມງານກອງທຶນໂລກ, CCM Hub ແລະ ພາກສ່ວນກ່ຽວຂ້ອງອື່ນໆ. ເບິ່ງຮູບທີ 1.

2. **ການຮັກສາບົດບາດໃນການຄຸ້ມຄອງ.** ຜູ້ຕາງໜ້າຈາກອົງການຕ່າງໆອາດຈະຄຸ້ນເຄີຍກັບຄວາມຮັບຜິດຊອບຂອງຕົນ ຫຼືກຳລັງຮຽນຮູ້ກ່ຽວກັບການຄຸ້ມຄອງວຽກງານດ້ານສຸຂະພາບໂລກເປັນຄັ້ງທຳອິດ. ວິທີການໃດກໍ່ຕາມ, ການກຳນົດທິດທາງສະມາຊິກໃໝ່ທີ່ສອດຄ່ອງ ແລະ ການລາຍງານປະຈຳປີ (ເຊັ່ນ: ການຮຽນຮູ້ທາງອິນເຕີເນັດ) ແມ່ນກຸນແຈ ສຳຄັນໃນການຮັບປະກັນໃຫ້ສະມາຊິກມີຄວາມຄຸ້ນເຄີຍກັບຄວາມຮັບຜິດຊອບຂອງຕົນໃນຖານະທີ່ເປັນສະມາຊິກ CCM. ກອງເລຂາ CCM ມີບົດບາດສຳຄັນໃນການສະໜອງເອກະສານທີ່ກ່ຽວຂ້ອງ ແລະ ກະກຽມເຄື່ອງມື ແລະ ແຫຼ່ງຂໍ້ມູນທີ່ຈຳເປັນໃຫ້ແກ່ສະມາຊິກ. ຂະບວນການເລືອກຕັ້ງສ່ວນໃຫຍ່ (ລວມທັງຄະນະກຳມະການ) ແມ່ນໄດ້ລະບຸໄວ້ໃນລະບຽບຂອງ CCM (ເຊິ່ງເປັນເອກະລັກສະເພາະຂອງ CCM ແຕ່ລະຄະນະ), ເອກະສານທີ່ສະມາຊິກທຸກຄົນຕ້ອງຄຸ້ນເຄີຍແລະ ນຳໃຊ້. ປະທານ CCM ຈະຕ້ອງເຮັດໃຫ້ສະມາຊິກຂອງຕົນມີຄວາມຮັບຜິດຊອບ ແລະ ເປັນຜູ້ນຳພາໂດຍຍຶດໝັ້ນການປະຕິບັດການຄຸ້ມຄອງທີ່ດີຕະຫຼອດໄລຍະທີ່ຍັງເປັນສະມາຊິກຢູ່.

3. **ຮັບປະກັນການຊີ້ນຳ ແລະ ຂໍ້ກຳນົດດ້ານຈັນຍາບັນ.** ສະມາຊິກທຸກຄົນເມື່ອໄດ້ຮັບການເລືອກຕັ້ງເຂົ້າມາເປັນສະມາຊິກ CCM ຈະຕ້ອງໄດ້ເຊັນຂໍ້ການົດດ້ານຈັນຍາບັນ, ນອກຈາກນັ້ນແລ້ວຍັງມີຄວາມຈຳເປັນຈະຕ້ອງໄດ້ຈັດການຂໍ້ຂັດແຍ້ງດ້ານຜົນປະໂຫຍດ ເຊິ່ງເປັນສິ່ງສຳຄັນທີ່ຈະຮັບປະກັນສະມາຊິກທີ່ຖືກຍົກເວັ້ນ ແລະ / ຫຼື ແຍກຕົວເອງອອກໃນເວລາສົນທະນາທີ່ອາດຈະມີຜົນປະໂຫຍດຈາກການລົງຄະແນນສຽງ. ການດຳເນີນງານທີ່ສຳຄັນຂອງ CCM ແມ່ນການຢັ້ງຢືນໃຫ້ສະມາຊິກ CCM ທຸກຄົນປະຕິບັດຫຼັກສູດການຮຽນດ້ານຈັນຍາບັນ. ປະທານ CCM ຕັ້ງໜ້າສົ່ງເສີມການພົວພັນກັບບັນດາພາກສ່ວນກ່ຽວຂ້ອງເພື່ອເຊື່ອມໂຍງການຕັດສິນຂໍ້ກຳນົດດ້ານຈັນຍາບັນເຂົ້າໃນທຸກໆວຽກງານຂອງCCM.

**ຮູບພາບທີ 1. ການຈັດຕັ້ງປະຕິບັດບໍລິຫານຄຸ້ມຄອງຂອງ CCM**




**ສັນຍາ (3 ປີ) ລວມມີ**

- **ກອບການຈັດຕັ້ງປະຕິບັດວຽກງານ-** ການປະຕິບັດຕາມເງື່ອນໄຂທີ່ກຳນົດ, ການປະເມີນ ແລະ ກິດຈະກຳຫຼັກ
- **ເພດານການລົງທຶນ** ອີງໃສ່ເງື່ອນໄຂການຈັດສັນງົບປະມານ & ຜົນການຈັດຕັ້ງປະຕິບັດຜ່ານມາ
- **ຄຳໝັ້ນສັນຍາໃນການສົມທົບທຶນ** ( ເຊັ່ນ ເຊົ່າຫ້ອງການ, ການວ່າຈ້າງພະນັກງານ...) **ຕໍ່ນະໂຍບາຍ CCM*

ຈຳນວນການເບີກຈ່າຍອີງຕາມ**ຜົນທີ່ໄດ້ຮັບຕໍ່ກັບກອບການຈັດຕັ້ງປະຕິບັດວຽກງານ** ແລະ ຕາມເງື່ອນໄຂ

**ການປິດສັນຍາການໃຫ້ທຶນ** ແລະ ການປະເມີນຜົນການຈັດຕັ້ງປະຕິບັດ CCM ເພື່ອກຳນົດລະດັບການລົງທຶນໃນຕໍ່ໜ້າ

## ພາກສ່ວນທີ່ກ່ຽວຂ້ອງໃນການດຳເນີນງານ

### ການນຳພາໂດຍ CCM

- ການນຳພາໂດຍCCM ແລະ ການບໍລິຫານຄຸ້ມຄອງຂອງກອງເລຂາ CCM. ທຸກໆCCM ປະກອບມີປະທານ 1 ທ່ານ ແລະ ຮອງປະທານ 1 ທ່ານ ຫຼື 2 ທ່ານ ເຊິ່ງຖືກເລືອກຕັ້ງໂດຍສະມາຊິກ CCM ຕາມເງື່ອນໄຂທີ່ກຳນົດໄວ້.

- ສະແດງຄຸນລັກສະນະຕ່າງໆເຊັ່ນ: ທັກສະໃນການອຳນວຍຄວາມສະດວກ ແລະ ການພົວພັນທີ່ດີເລີດ, ມີຄວາມສາມາດໄກ່ເກ່ຍລະຫວ່າງພາກສ່ວນກ່ຽວຂ້ອງ, ສາມາດຊຸກຍູ້ສະມາຊິກ CCM ແລະ ຄູ່ຮ່ວມມື.

**ກອງເລຂາ CCM**

- ອຳນວຍຄວາມສະດວກໃຫ້ແກ່ວຽກງານ CCM ໂດຍສາມາດປະຕິບັດການຄຸ້ມຄອງທີ່ມີປະສິດຕິຜົນ (ເຊັ່ນ: ສາມາດຂັບເຄື່ອນການຕັດສິນໃຈຜ່ານວາລະທີ່ສຳຄັນ ແລະ ຂໍ້ມູນຈະຕ້ອງໄດ້ແບ່ງປັນທັນທີຫຼັງຈາກການປະຊຸມ) ໂດຍນຳໃຊ້ທັກສະທາງດ້ານການເມືອງ ແລະ ເຕັກນິກທີ່ມີຄວາມຊຳນິຊຳນານສູງ.

**ເອກະສານຄັດຕິດ ແລະ ແຫຼ່ງຂໍ້ມູນ**

- ເອກະສານຄັດຕິດ 1 - ພາລະບົດບາດສາລັບຫົວໜ້າກອງເລຂາ CCM
- ເອກະສານຄັດຕິດ 2 - ພະລະບົດບາດການໃນການຈັດຕັ້ງປະຕິບັດບໍລິຫານຄຸ້ມຄອງຂອງກອງເລຂາ CCM
- ຫຼັກສູດການຮຽນຜ່ານທາງເອເລັກໂຕນິກກ່ຽວກັບການດຳເນີນງານ (ໃນປີ 2021)
- ຫຼັກສູດການຮຽນຜ່ານທ່າງເອເລັກໂຕນິກຂໍ້ກຳນົດດ້ານຈັນຍາບັນ CCM

**ເອກະສານຄັດຕິດ 3 -ຕົວຂັບເຄື່ອນຫຼັກ: ການດຳເນີນງານແມ່ນເປັນພື້ນຖານຂອງສາມຂົງເຂດຮັບຜິດຊອບຫຼັກຂອງ CCM**

**1. ການຕິດຕາມກວດກາ -** ເພີ່ມປະສິດທິພາບຂະບວນການຕິດຕາມກວດກາເພື່ອເພີ່ມການລົງທຶນດ້ານສາທາລະນະສຸກໃຫ້ສູງສຸດ

CCM ທີ່ເຮັດວຽກໄດ້ດີຈະເຮັດໃຫ້ສະມາຊິກສຸມໃສ່ປະເດັນຍຸດທະສາດຂອງຜົນການປະຕິບັດທຶນຊ່ວຍເຫຼືອ ແລະ ຍັງຮັບປະກັນແຫຼ່ງທຶນໃຫ້ພຽງພໍສໍາລັບວຽກງານຕິດຕາມກວດກາເຊິ່ງປະກອບມີ:

- ການຕິດຕາມກວດກາທຸກດ້ານທີ່ກ່ຽວຂ້ອງຂອງຂະບວນການສະໜອງທຶນຂອງກອງທຶນໂລກ: ແຜນຍຸດທະສາດແຫ່ງຊາດ, ການວິເຄາະຊ່ອງຫວ່າງ, ຂັ້ນຕອນການອອກແບບເພື່ອຂໍທຶນຈົນເຖິງຂັ້ນຕອນສຸດທ້າຍໃນການເຊັນສັນຍາຂໍທຶນຊ່ວຍເຫຼືອຈາກກອງທຶນໂລກໂດຍຜູ້ຮັບທຶນຕົ້ນຕໍ (PRs). ຮັບປະກັນວ່າທຸກຂະບວນການແມ່ນໄດ້ມີການບັກທຶກເອກະສານ, ມີການຊີ້ນໍາ ແລະ ຕັດສິນໃຈໂດຍອີງໃສ່ຂໍ້ມູນທີ່ເໝາະສົມ.
- ການສະໜັບສະໜູນ ຫຼື ເຂົ້າຮ່ວມໃນຄະນະກຳມະການກວດກາເພື່ອເຮັດໜ້າທີ່ຂອງຕົນໃນການຮອບຮວມ ແລະ ວິເຄາະຂໍ້ມູນທຶນຊ່ວຍເຫຼືອ ແລະ ຂໍ້ມູນພາຍໃນ, ໂດຍອີງຂໍ້ມູນນີ້ປະກອບເປັນຂໍ້ສະເໜີແນະເພື່ອແກ້ໄຂຂໍ້ຫຍຸ້ງຍາກ ແລະ ຄວາມຕ້ອງການການຮ່ວມມືດ້ານເຕັກນິກ. ໃນສະພາບການທີ່ມີການປ່ຽນຖ່າຍ, ແມ່ນຕິດຕາມກວດກາແຜນວຽກການປ່ຽນຖ່າຍ ແລະ ການຈັດຕັ້ງປະຕິບັດຂໍ້ແນະນໍາຈາກການປະເມີນຄວາມພ້ອມຂອງການປ່ຽນຖ່າຍ.
- ການສໍາເລັດຂັ້ນຕອນການສະໝັກຂໍທຶນຈາກກອງທຶນໂລກລວມທັງການເຂົ້າຮ່ວມໃນການປຶກສາຫາລືເພື່ອສ້າງແຜນຂໍທຶນຈາກກອງທຶນໂລກ ແລະ ຂັ້ນຕອນການຄັດເລືອກເອົາຜູ້ຮັບທຶນຕົ້ນຕໍພ້ອມທັງຮັບປະກັນການຍື່ນບົດສະເໜີຂໍທຶນໃຫ້ສອດຄ່ອງກັບແຜນຍຸດທະສາດແຫ່ງຊາດ ແລະ ສາກົນເພື່ອຍຸດຕິພະຍາດໃນປີ 2030.
- ການເຂົ້າຮ່ວມປະຖົມນິເທດ[2] "ຮັບຮູ້ທຶນຊ່ວຍເຫຼືອຂອງຕົນ" ຫຼັງຈາກສໍາເລັດຂັ້ນຕອນການສະເໜີຂໍທຶນຊ່ວຍເຫຼືອ, ຮ່ວມກັບທີມງານກອງທຶນໂລກ ແລະ ຊັບພະຍາກອນທີ່ກ່ຽວຂ້ອງຈາກທີມງານກອງເລຂາ CCM.
- ການຂໍການສະໜັບສະໜູນໃນນາມຕາງໜ້າບັນດາພາກສ່ວນທີ່ກ່ຽວຂ້ອງພາຍໃນກ່ຽວກັບຂົງເຂດຕ່າງໆທີ່ເຊື່ອມໂຍງກັນເພື່ອເຂົ້າເຖິງການຈັດສັນທຶນຊ່ວຍເຫຼືອຂອງກອງທຶນໂລກຢ່າງເຕັມທີ່, ເຊັ່ນວ່າການປະຕິບັດຄໍາ

[2] ອີງຕາມບົດວິໄຈຄົ້ນຄ້ວາຈາກການທົດລອງຂະບວນການວິວັດຂອງ CCM, ເຊິ່ງອັນນີ້ແມ່ນການປະຕິບັດຢ່າງເປັນທາງການ ສໍາລັບສະມາຊິກ CCM ເພື່ອໃຫ້ມີຄວາມເຂົ້າໃຈກ່ຽວກັບທຶນຊ່ວຍເຫຼືອ ແລະ ອົງປະກອບຂອງມັນ. ແລ້ວສະມາຊິກ CCM ຈະສາມາດປະຕິບັດໜ້າທີ່ຕິດຕາມກວດກາຢ່າງມີປະສິດທິຜົນສູງກວ່າເກົ່າ

ໝັ້ນສັນຍາດ້ານທຶນສົມທົບຂອງລັດຖະບານ ແລະ / ຫຼື ຜູ້ຮັບທຶນຕົ້ນຕໍໄດ້ມີການປັບປຸງການຈັ້ງຕັ້ງປະຕິບັດທຶນຊ່ວຍເຫຼືອ.

**2. ການຈັດວາງທີ່ຕັ້ງແລະໂຄງສ້າງ** -ອຳນວຍຄວາມສະດວກໃຫ້ແກ່ການສົນທະນາທາງດ້ານການເມືອງ ແລະ ເພີ່ມທະວີຄວາມພະຍາຍາມໃຫ້ມີຄວາມຍືນຍົງ

CCM ທີ່ມີການຄຸ້ມຄອງທີ່ເຂັ້ມແຂງຄວນມີຄວາມໜ້າເຊື່ອຖືທີ່ຈຳເປັນໃນການມີສ່ວນຮ່ວມໃນລະດັບການເມືອງ ແລະ ເຮັດໜ້າທີ່ເປັນຕົວແບບໃນເວທີການປະສານງານເຊິ່ງລວມເອົາທາງສຽງຂອງການຈັດຕັ້ງທາງສັງຄົມ ແລະ ສາມາດເພີ່ມມູນຄ່າໃຫ້ແກ່ການຄຸ້ມຄອງສຸຂະພາບ, ໂດຍຜ່ານ:

- ການກະກຽມຂໍ້ສະເໜີກ່ຽວກັບການຈັດວາງທີ່ຕັ້ງ ແລະ ໂຄງສ້າງ CCM ຕາມສະພາບພາຍໃນປະເທດ ແລະ ການເຊື່ອມໂຍງແຜນວາດລະຫວ່າງ CCM ແລະ ເວທີການປະສານງານທີ່ສຳຄັນອື່ນໆພາຍໃນປະເທດ ເຊິ່ງສະໜັບສະໜູນຄວາມກົມກຽວ ແລະ ເພີ່ມປະສິດທິພາບດ້ານການຄຸ້ມຄອງເພື່ອຕ້ານກັບ 3 ພະຍາດ. ໃນບັນດາປະເທດທີ່ອີງປະກອບຂອງພະຍາດກຳລັງກະກຽມ ຫຼື ກຳລັງປ່ຽນຈາກການສະໜອງທຶນຂອງກອງທຶນໂລກ, ແມ່ນສຸມໃສ່ການເຊື່ອມໂຍງເຂົ້າກັບເວທີອື່ນໆທີ່ກ່ຽວຂ້ອງກັບການກະກຽມ, ການວາງແຜນ ແລະ ການຈັດຕັ້ງປະຕິບັດການປ່ຽນຖ່າຍ.
- ການເຂົ້າຮ່ວມເວທີສາທາລະນະສຸກແຫ່ງຊາດອື່ນໆເພື່ອເປັນຕົວແທນບອກສຽງຂອງ CCM ແລະ ເພື່ອກຳນົດການເຮັດວຽກຮ່ວມກັນໃນການປະສານງານການລົງທຶນດ້ານສາທາລະນະສຸກ ແລະ ການລົງທຶນຂອງຜູ້ໃຫ້ທຶນ.
- ການມີສ່ວນຮ່ວມໃນການວາງແຜນ ແລະ ການຈັດຕັ້ງປະຕິບັດການປ່ຽນຖ່າຍ ແລະ ສ້າງຄວາມຍືນຍົງລວມທັງການຮັບປະກັນການມີສ່ວນຮ່ວມຂອງການຈັດຕັ້ງທາງສັງຄົມ ແລະ ການປະກອບສ່ວນເຂົ້າໃນຄວາມພະຍາຍາມເພື່ອສ້າງຄວາມຍືນຍົງຂອງກອງທຶນໂລກ ແລະ ການລົງທຶນດ້ານສາທາລະນະສຸກຈາກພາກສ່ວນອື່ນໆ.[3]

**3. ການມີສ່ວນຮ່ວມ** - ສົ່ງເສີມການມີສ່ວນຮ່ວມທີ່ມີຄວາມໝາຍ, ເປີດກ້ວາງ ແລະ ຫ້າວຫັນຂອງພາກສ່ວນກ່ຽວຂ້ອງທີ່ສຳຄັນ

ທຸກອົງກອນຄວນເປັນຕົວແທນທີ່ມີປະສິດທິພາບ ແລະ ເຂົ້າຮ່ວມຢ່າງຫ້າວຫັນໃນຂະບວນການຄຸ້ມຄອງ ເຊິ່ງຈະປະສົບຜົນສຳເລັດໄດ້ໂດຍຜ່ານ:

- ການວິເຄາະ ແລະ ແລກປ່ຽນການຕິດຕໍ່ສື່ສານທີ່ກ່ຽວຂ້ອງ (ເຊັ່ນ: ກ່ຽວຂ້ອງກັບການໃຫ້ທຶນຊ່ວຍເຫຼືອຈາກກອງທຶນໂລກ, ຈາກຄູ່ຮ່ວມມືດ້ານວິຊາການ, ຄູ່ຮ່ວມມືອື່ນໆພາຍໃນປະເທດ) ແລະ ສ່ວນພົວພັນຂອງການຕິດຕໍ່ສື່ສານດັ່ງກ່າວໃນການຈັດຕັ້ງປະຕິບັດ.
- ການຮັບປະກັນວ່າຂໍ້ມູນທີ່ໜ້າເຊື່ອຖື ແລະ ໄດ້ຮັບການຢັ້ງຢືນຂອງຊຸມຊົນກ່ຽວກັບ CCM ແມ່ນໄດ້ຖືກນຳໄປປຶກສາຫາລືກັບພາກລັດລະດັບສູງເພື່ອເຮັດໃຫ້ການຕອບໂຕ້ຕໍ່ສາມພະຍາດແບບມີຂໍ້ມູນຫຼາຍຂຶ້ນຕື່ມ.
- ການສ້າງສະພາບແວດລ້ອມທີ່ເປີດກ້ວາງ ແລະ ປອດໄພເຊິ່ງສະມາຊິກ CCM ຈະໄດ້ຮັບການຊຸກຍູ້ໃຫ້ມີສ່ວນຮ່ວມ ພ້ອມທັງເຮັດໃຫ້ທຸກອົງກອນມີຄວາມຮັບຜິດຊອບໃນລະດັບດຽວກັນ.
- ການມີສ່ວນຮ່ວມຂອງພະນັກງານອາວຸໂສຈາກພາກລັດເພື່ອສົ່ງເສີມບົດບາດຂອງ CCM ໃນຂົງເຂດສາທາລະນະສຸກແຫ່ງຊາດ.

---

[3] ຂໍ້ແນະນຳສຳລັບຄວາມຍືນຍົງແລະການປ່ຽນຖ່າຍ,15 ພຶດສະພາ 2020, https://www.theglobalfund.org/media/5648/core_sustainabilityandtransition_guidancenote_en.pdf, pg 11,16